**ເວທີສົນທະນາເພື່ອສົ່ງເສີມ ຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມຢູ່ໃນທຸລະກິດ,**

**ວັນທີ 24 ກຸມພາ 2022**

ຂ່າວ

**ຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມໃນທຸລະກິດ ແມ່ນສິ່ງທີ່ສຳຄັນໃນການຂັບເຄື່ອນການຟື້ນຕົວທາງດ້ານເສດຖະກິດ ຈາກຜົນກະທົບຂອງການລະບາດ ຂອງພະຍາດ COVID-19**

ທີ່ ນະຄອນຫຼວງວຽງຈັນ, ວັນທີ 24 ກຸມພາ 2022 ບັນດາທຸລະກິດລາວ ໄດ້ລວມກັນເພື່ອເປັນສ່ວນໜຶ່ງໃນເວທີສົນທະນາ ເພື່ອສົ່ງເສີມຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມ (D&I) ໃນທຸລະກິດເພື່ອສ້າງຄວາມເຂົ້າໃຈກ່ຽວກັບຜົນປະໂຫຍດ, ການປະຕິບັດ ແລະ ຜົນກຳໄລ ໂດຍການນຳວິທີການແບບມີສ່ວນຮ່ວມສຳລັບບ່ອນເຮັດວຽກ ແລະ ສະພາບແວດລ້ອມທີ່ເອື້ອອຳນວຍທາງທຸລະກິດມາໃຊ້.

D&I ໃນທຸລະກິດ ແມ່ນມີທ່າອ່ຽງທີ່ເພີ່ມຂຶ້ນໃນທົດສະວັດທີ່ຜ່ານມາ ເນື່ອງຈາກວ່າການຄົ້ນຄວ້າຍັງສືບຕໍ່ສະແດງໃຫ້ເຫັນເຖິງຂໍ້ດີຂອງການຈ້າງແຮງງານທີ່ມີຄວາມຫຼາກຫຼາຍ.

ທຸລະກິດຕ່າງໆທີ່ຈ້າງພະນັກງານທີ່ມີພື້ນຖານທີ່ແຕກຕ່າງກັນ ແລະ ມີປະສົບການທີ່ເປັນເອກະລັກສະເພາະເຊິ່ງລວມທັງຄົນພິການ, ຄົນຊົນເຜົ່າທີ່ແຕກຕ່າງກັນ, ຄົນທີ່ມີຄວາມຫຼາກຫຼາຍທາງເພດ ຫຼື (LGBTQI) ແລະ ໄວໜຸ່ມ ໄດ້ຮັບການພິສູດແລ້ວວ່າ ມີຄວາມໄດ້ປຽບເໜືອຄູ່ແຂ່ງໃນອຸດສາຫະກຳ ດ້ວຍການດຶງດູດແລະ ຮັກສາພະນັກງານຜູ້ມີຄວາມສາມາດໄວ້ໄດ້ດີກວ່າ, ສາມາດແກ້ໄຂບັນຫາໄດ້ດີກວ່າ, ຊ່ວຍເພີ່ມຊື່ສຽງໃຫ້ທຸລະກິດຂອງພວກເຂົາໃຫ້ກັບລູກຄ້າ ແລະ ຜູ້ສະໜອງ ແລະ ຍັງປັບປຸງພາບຫຼັກການດຳເນີນທຸລະກິດໂດຍລວມຂອງພວກເຂົາອີກ.

ມີການພິສູດຂອງສາກົນທີ່ໄດ້ສະແດງໃຫ້ເຫັນວ່າ 70% ຂອງທຸລະກິດ ທີ່ມີຄວາມຫຼາກຫຼາຍແມ່ນມີແນວໂນ້ມໃນການເຂົ້າເຖິງຕະຫຼາດໃຫມ່ ແລະ ໄດ້ຮັບຜົນກຳໄລເປັນເງິນຫຼາຍກວ່າ 2.3 ເທົ່າກວ່າທຸລະກິດທີ່ບໍ່ມີການຈ້າງງານພະນັກງານທີ່ມາຈາກກຸ່ມຄົນທີ່ຫຼາກຫຼາຍ.

ໃນໄລຍະ 2 ປີທີ່ຜ່ານມາ ການແຜ່ລະບາດຂອງພະຍາດ ໂຄວິດ-19 ໄດ້ສົ່ງຜົນກະທົບຕໍ່ທຸລະກິດເກືອບທັງໝົດໃນໂລກ ເຮັດໃຫ້ລະບົບຕ່ອງໂສ້ຂອງການສະໜອງຢຸດສະງັກ, ຄວາມຕ້ອງການທາງດ້ານຜະລິດຕະພັນ ແລະ ການບໍລິການທີ່ຫຼຸດລົງ, ການປິດການດຳເນີນທຸລະກິດ ອີງຕາມຄຳສັ່ງຂອງລັດຖະບານ ແລະ ການທັນປົ່ງນພະນັກງານ. ໃນ ສປປ ລາວ, ຍ້ອນການລະບາດຂອງພະຍາດ ໂຄວິດ-19, ໃນປີ 2021, 5.5% ຂອງທຸລະກິດ ໄດ້ປິດກິດຈະການຢ່າງຖາວອນ ແລະ 33% ໄດ້ປິດກິດຈະການຊົ່ວຄາວ.

ສ່ວນບັນດາທຸລະກິດທີ່ຍັງຄົງດຳເນີນນັ້ນ, 65% ແມ່ນປະສົບກັບບັນຫາລາຍໄດ້ທີ່ຫຼຸດລົງ.

*“ເປັນສິ່ງທີ່ປະຕິເສດບໍ່ໄດ້ ວ່າ ບັນດາທຸລະກິດ ຂອງ ລາວ ແມ່ນໄດ້ຮັບຜົນກະທົບຢ່າງໃຫຍ່ຫຼວງ ຈາກການແຜ່ລະບາດຂອງພະຍາດ ໂຄວິດ-19 ໂດຍສະເພາະໃນຂະແໜງການທ່ອງທ່ຽວ, ການບໍລິການ ແລະ ຂະແໜງການຜະລິດ. ທຸລະກິດຫຼາຍຂະແໜງການໄດ້ລາຍງານວ່າ ພວກເຂົາບໍ່ພຽງແຕ່ສູນເສຍລາຍໄດ້ ແຕ່ຍັງກະທົບ ທາງດ້ານຊັບພະຍາກອນມະນຸດ ແລະ ສູນເສຍພະນັກງານທີ່ມີຄວາມສາມາດອີກດ້ວຍ. ພວກເຮົາກຳລັງພິຈາລະນາ ນະວັດຕະກຳພາຍໃນຂອງພວກເຮົາ, ແນວໂນ້ມຂອງສາກົນ, ແລະ ການປະຕິບັດທີ່ດີທີ່ສຸດ ທີ່ບັນດາທຸລະກິດລາວ ສາມາດນຳມາປັບໃຊ້ໄດ້ ເພື່ອຊ່ວຍໃຫ້ທຸລະກິດສາມາດ ຟື້ນຕົວຈາກຜົນກະທົບຂອງການແຜ່ລະບາດ ແລະ ຂັບເຄື່ອນການເຕີບໂຕ ທາງດ້ານເສດຖະກິດ ຂອງປະເທດ,”* ກ່າວໂດຍ ທ່ານ ທະນົງສິນ ກັນລະຍາ, ຮອງປະທານ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (LNCCI).

ໃນຊ່ວງວິກິດນີ້ D&I ສາມາດຊ່ວຍບໍລິສັດຕ່າງໆ ແກ້ໄຂສິ່ງທີ່ຂັດຂວາງໃນການດຳເນີນງານຂອງພວກເຂົາ ວາງແຜນເພື່ອການຟື້ນຕົວຂອງທຸລະກິດ ແລະ ກຽມພ້ອມທີ່ຈະຄົ້ນຄິດຫາ ຮູບແບບທຸລະກິດ ຂອງພວກເຂົາຄືນໃຫມ່ ໂດຍສະເພາະໃນແບບ "ການປະຕິບັດແບບໃຫມ່." ທຸລະກິດທີ່ຍອມຮັບ D&I ແມ່ນມີແນວໂນ້ມທີ່ດີກວ່າ ໃນການປັບຕົວເຂົ້າກັບການຈັດການວຽກແບບທາງໄກຢ່າງໄວວາ ສາມາດຮັກສາ ພະນັກງານ ຂອງບໍລິສັດດ້ວຍການຮັກສາຄວາມຜູກພັນໜັກແໜ້ນ ແລະ ຄວາມໄວ້ວາງໃຈ, ຕັ້ງເປົ້າໝາຍ ຕະຫຼາດຂອງບໍລິສັດ ພາຍຫລັງ COVID-19 ພ້ອມທັງດຶງດູດພອນສະຫວັນໃໝ່ຂອງ ພະນັກງານ.

ທ່ານ ນາງ ແຄັດເທີຣີນ ເຟືອງ, ຮອງຜູ້ຕາງໜ້າ ອົງການສະປະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ, ໄດ້ກ່າວວ່າ, *“ການແຜ່ລະບາດຂອງພະຍາດໄດ້ເຮັດໃຫ້ເກີດມີການວ່າງງານສະເລ່ຍຈາກ 2% ເປັນ 22% ໃນ ສປປ ລາວ, ເຊິ່ງມີຫຼາຍກວ່າ 500,000 ຄົນ ສູນເສຍວຽກເຮັດງານທຳ ຫຼື ຫາວຽກເຮັດບໍ່ໄດ້. ແມ່ຍິງ, ຄົນພິການ, LGBTQI, ແລະ ໄວໜຸ່ມໄດ້ຮັບຜົນກະທົບຫຼາຍທີ່ສຸດ. ໃນຂະນະທີ່ເສດຖະກິດຂອງລາວເລີ່ມຟື້ນຕົວຄືນ ເຊິ່ງມັນຈະເປັນໂອກາດ ໃຫ້ແກ່ນັກທຸລະກິດ ໃນການເລືອກເອົາຄົນທີ່ເກັ່ງ ແລະ ໂດດເດັ່ນຈາກກຸ່ມປະຊາກອນລາວທີ່ມີຄວາມຫຼາກຫຼາຍ. ບັນດາບໍລິສັດທີ່ນຳເອົາຫລັກການ D&I ມາໃຊ້ຈະເປັນຜູ້ນຳໜ້າໃນການແຂ່ງຂັນ."*

ເວທີສົນທະນານີ້ມີຈຸດປະສົງແນໃສ່ ເພື່ອສ້າງຄວາມຮັບຮູ້ກ່ຽວກັບຫຼັກການ D&I ແລະ ຜົນປະໂຫຍດ ໃຫ້ແກ່ວິສາຫະກິດທີ່ດຳເນີນທຸລະກິດຢູ່ ສປປ ລາວ. ພາກສ່ວນກ່ຽວຂ້ອງຫຼັກ ຈະໄດ້ຮັບໂອກາດທີ່ຈະແບ່ງປັນປະສົບການ ແລະ ການຈັດຕັ້ງປະຕິບັດທີ່ດີຈາກການຮັບຮອງເອົາ D&I ໃນບ່ອນເຮັດວຽກຂອງເຂົາເຈົ້າ ໂດຍເນັ້ນໃສ່ບົດຮຽນໃນການນຳໃຊ້ D&I ເພື່ອເສີມສ້າງຄວາມຢືດຢຸ່ນ ຂອງທຸລະກິດ ແລະ ການຟື້ນຕົວຈາກການແຜ່ລະບາດຂອງພະຍາດ COVID-19.

ບັນດານັກທຸລະກິດຍັງມີໂອກາດໄດ້ຮຽນຮູ້ຈາກອົງການຈັດຕັ້ງທາງນສັງຄົມ ກ່ຽວກັບປະສົບການຂອງພະນັກງານຈາກກຸ່ມທີ່ຖືກເບິ່ງຂ້າມ ເພື່ອຜ່ານຜ່າອຸປະສັກໃນຕະຫຼາດແຮງງານ ແລະ ບ່ອນເຮັດວຽກ. ອົງການຈັດຕັ້ງທ້ອງຖິ່ນທີ່ເປັນຕົວແທນໃຫ້ແກ່ກຸ່ມທີ່ມີຄວາມສ່ຽງ ແລະ ກຸ່ມຄົນທີ່ດ້ອຍໂອກາດ ຈະໄດ້ຮັບຂໍ້ມູນເບື້ອງຕົ້ນ ກ່ຽວກັບໂອກາດໃນການຈ້າງງານທີ່ມີຄວາມເປັນໄປໄດ້ ແລະ ຍຸດທະສາດການຮັບສະໝັກພະນັກງານຂອງບໍລິສັດລາວ ທີ່ກໍາລັງຫາວິທີໃນການ ດຶງດູດພະນັກງານຈາກກຸ່ມຄົນທີ່ດ້ອຍໂອກາດ.

*"ໃນປີ 2019, ພວກເຮົາພົບວ່າ 60% ຂອງປະຊາກອນໃນກຸ່ມ LGBTQI ໃນອາຊີບຕ່າງໆຢູ່ໃນ ສປປ ລາວ ປະສົບກັບສິ່ງທ້າທາຍໃນການຊອກຫາວຽກເຮັດງານທໍາ ຍ້ອນລົດສະນິຍົມທາງເພດ ແລະ ລັກສະນະທາງເພດຂອງເຂົາເຈົ້າ. ການສ້າງຄວາມຮັບຮູ້ ແລະ ການໃຫ້ຄໍາແນະນໍາ ໃນການປະຕິບັດຕົວຈິງໃຫ້ບັນດາທຸລະກິດຕ່າງໆກ່ຽວກັບລົດສະນິຍົມທາງເພດ ແລະ ລັກສະນະທາງເພດນັ້ນ ເປັນການດີສໍາລັບບັນດາທຸລະກິດ ແລະ ຈໍາເປັນຕໍ່ການປົກປ້ອງສິດທິມະນຸດຂອງຄົນ LGBTQI ເພື່ອຮັບປະກັນວ່າພວກເຮົາຈະບໍ່ຖິ້ມໃຜໄວ້ຂ້າງຫຼັງໃນຂະນະທີ່ພວກເຮົາກ້າວໄປຂ້າງໜ້າເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງຂອງອົງການສະຫະປະຊາຊາດພາຍໃນປີ 2030,"* ກ່າວໂດຍ ທ່ານ ອານັນ ບົວພາ, ຜູ້ກໍ່ຕັ້ງ ແລະ ປະທານ ສະມາຄົມ ພູມໃຈທີ່ເປັນເຮົາ.

ເວທີສົນທະນາ ເພື່ອສົ່ງເສີມຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມໃນທຸລະກິດ ແມ່ນໄດ້ຮ່ວມກັນຈັດຂຶ້ນ ແລະ ສະໜັບສະໜູນໂດຍ LNCCI, ຫ້ອງການສະຖານທູດການາດາ, ສະມາຄົມ ພູມໃຈທີ່ເປັນເຮົາ ແລະ UNDP ໂດຍມີບັນດານັກທຸລະກິດຂອງສະມາຄົມນັກທຸລະກິດອາເມລິກາ-ລາວ, ສະພາການຄ້າອົດສະຕຣາລີ, ກຸ່ມທຸລະກິດອັງກິດ, ສະພາການຄ້າ ເອີລົບ, ສະມາຄົມ ການຄ້າພາຍນອກຍີ່ປຸ່ນ, ສະພາການຄ້າ ລາວ-ຈີນ ແລະ ບັນດາທຸລະກິດອື່ນໆອີກ.

**ສໍາລັບຂໍ້ມູນເພີ່ມເຕີມກະລຸນາຕິດຕໍ່:**

ທ່ານ ນາງ ອັກສອນທິບ ສົມວໍລະຈິດ

ຜູ້ຮັບຜິດຊອບຝ່າຍການສື່ສານ, UNDP

ຖະໜົນລ້ານຊ້າງ P.O. Box 345

ນະຄອນຫຼວງວຽງຈັນ, ສປປ ລາວ

aksonehip.somvorachit@undp.org

+856 20 5502 1550